ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ລັດວິສາຫະກິດລົດໄຟແຫ່ງຊາດລາວ

ເລກທີ 362 /ລລຟລ
ນະຄອນຫຼວງວຽງຈັນ ,ວັນທີ 9 ພະຈິກ 2026

ໜັງສືແຈ້ງເຊີນປະມູນ

1. ລັດວິສາຫະກິດລົດໄຟແຫ່ງຊາດລາວ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ເອົາບໍລິສັດປັບປຸງຕົບແຕ່ງຫ້ອງການ ຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ສຳລັບການປັບປຸງຕົບແຕ່ງຫ້ອງການ ເພື່ອປັບປຸງຕົບແຕ່ງຫ້ອງການລັດວິສາຫະກິດລົດໄຟແຫ່ງຊາດລາວ ກຳນົດເວລາໃນການຈັດຕັ້ງປະຕິບັດ 90 ວັນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈທີ່ ເຂົ້າຮ່ວມແຂ່ງຂັນການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ລັດວິສາຫະກິດລົດໄຟແຫ່ງຊາດລາວ ສະຖານີລົດໄຟວຽງຈັນ(ຄຳສະຫວາດ), ບ້ານຄຳສະຫວາດ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ເບີໂທຕິດຕໍ່ 020 55430922, 020 54645979 ໃນວັນລັດຖະການ;
4. ເອກະສານປະມູນເລີ່ມຂາຍແຕ່ວັນທີ 10 ພະຈິກ 2026 ຫາ ວັນທີ 14 ທັນວາ 2026 ລາຄາຊອງປະມູນ ແມ່ນ 1,500,000 ກີບ/ຊອງ; ວິທີການຊຳລະເປັນເງິນສົດ ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກງານການປະມູນ;
5. ທຸກໆຊອງປະມູນຕ້ອງສົ່ງກ່ອນເວລາ 10:00 ໂມງ ຂອງວັນທີ 14 ທັນວາ 2026 ແລະ ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 14 ທັນວາ 2026 ເວລາ 10:00 ໂມງ ຂອງວັນດຽວກັນ ທີ່ຫ້ອງປະຊຸມລັດວິສາຫະກິດລົດໄຟແຫ່ງຊາດລາວ, ສະຖານີລົດໄຟວຽງຈັນ(ຄຳສະຫວາດ), ບ້ານຄຳສະຫວາດ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຊອງປະມູນໃດສົ່ງຊ້າເກີນເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ;
6. ທຸກຊອງປະມູນຕ້ອງມີການຄ້ຳປະກັນດ້ວຍ ແຊັກ (ວີຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ, ຊຶ່ງມີມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄອນດ້ວຍ.

ຜູ້ອຳນວຍການໃຫຍ່

ລັດວິສາຫະກິດ ລົດໄຟແຫ່ງຊາດລາວ LAO NATIONAL RAILWAY STATE ENTERPRISE

ດາວຈັນດາ ສີຫາລາດ